**ບົດຮຽນໂຮງຮຽນວັນອາທິດ**

ວັນອາທິດ ທີ 22 ມະກະຣາ 2023 (01-22-2023)

---

**ມັນສອດຄ່ອງກັບພຣະຄັມພີບໍ່?**

*ການຫຼອກລວງອັນໃດ(scam) ທີ່ໜ້າສົນໃຈທີ່ສຸດທີ່ທ່ານໄດ້ຍິນມາ?*

**ຈຸດສໍາຄັນໃນບົດຮຽນ**: ສຽງຂອງພຣະເຈົ້າບໍ່ເຄີຍຂັດກັບພຣະຄັມພີຈັກເທື່ອ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອບໍ່ນານມານີ້ ແມ່ຂອງຂ້ອຍໄດ້ຮັບໂທຣະສັບລົບກວນເລື້ອຍໆ. ຄົນຜູ້ນັ້ນເວົ້າວ່າ, "ແມ່ຕູ້! ຂ້ານ້ອຍດີໃຈຫຼາຍທີ່ເຈົ້າຮັບ!" ລາວບອກວ່າລາວຊື່ ໄມຄ໌, ຫຼານຂອງນາງ. ລາວເວົ້າວ່າລາວຖືກອຸບັດຕິເຫດຣົດຕໍາກັນຊຶ່ງຜູ້ຂັບຂີ່ຄົນອື່ນນັ້ນບາດເຈັບ. ເຈົ້າໜ້າທີ່ຕໍາຣວດໄດ້ຈັບລາວໃສ່ຄຸກ. ລາວຕ້ອງການໃຫ້ແມ່ຕູ້ສົ່ງເງິນໄປປະກັນລາວອອກຄຸກ. ແມ່ຂອງຂ້ອຍຮັກຫຼານຊາຍຂອງນາງ, ແຕ່ມີບາງສິ່ງທີ່ບໍ່ຖືກຕ້ອງອັນເປັນພິລຸດໄດ້. ນາງບອກຜູ້ໂທວ່າສຽງຂອງລາວບໍ່ຄືສຽງຫຼານຊາຍຂອງນາງ. ປົກກະຕິ, ນາງຮູ້ຈັກຊີວິດຂອງໄມຄ໌ ດີທຸກຢ່າງ. ລາວເຄີຍຢູ່ເຮືອນຂອງນາງລະຍະນຶ່ງຕອນລາວຍ້າຍມາຢູ່ເມືອງຂອງນາງທໍາອິດ. ຜູ້ໂທຂູຊີວ່າລາວແມ່ນຫຼານຊາຍຂອງນາງ ແລະຢ່າງແນ່ນອນວ່ານາງບໍ່ຢາກໃຫ້ລາວຕິດຄຸກຂ້າມຄືນ. ລາວເລີ່ມຮ້ອງໄຫ້ແລະອ້ອນວອນໃຫ້ນາງຊ່ອຍລາວ. ແມ່ຂອງຂ້ອຍຈໍາສຽງຫຼານຊາຍຂອງເພິ່ນໄດ້ດີແຕ່ນີ້ ມັນບໍ່ແມ່ນ. ນາງຈຶ່ງວາງສາຍ.

ໂລກປະຈຸບັນນີ້ເຕັມໄປດ້ວຍສຽງຜິດພ້ຽນແລະຫຼອກລວງ, ແລະມີຫຼາຍຄົນກໍອ້າງວ່າເວົ້າເພື່ອພຣະເຈົ້າ. ພຣະຄັມພີໄດ້ສະແດງໃຫ້ເຫັນຄວາມແຕກຕ່າງວ່າ ສຽງໃດຈິງ ແລະ ສຽງໃດບໍ່ຈິງ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, 3,)

**ການສຶກສາພຣະຄັມພີ**

**1. <u>ປະຖົມການ 3:1</u>.**

*1. ງູເປັນສັດທີ່ຫຼັກແຫຼມກວ່າສັດທັງຫຼາຍທີ່ພຣະຜູ້ເປັນເຈົ້າໄດ້ສ້າງໄວ້ ງູໄດ້ຖາມຜູ້ຍິງວ່າ, "ແມ່ນແທ້ບໍ ທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ພວກເຈົ້າກິນໝາກໄມ້ໃນສວນນີ້?"*

ແນວໃດກໍຕາມ, ຂໍ້ພຣະທັມຕອນຕົ້ນຂອງບົດ 3, ແຍ້ມໃຫ້ຜູ້ອ່ານຮູ້ວ່າມີງູໃນອຸທຍານ! ພຣະເຈົ້າປະກາດວ່າສິ່ງຊົງສ້າງລ້ວນເປັນ "ສິ່ງດີ" (ປຖກ 1:25). ແຕ່ວ່າ ສັດເລືອຄານໂຕນີ້ເປັນທີ່ສດຸດຕາຫຼາຍກວ່າໝູ່. ມັນຖືກເອີ້ນວ່າ "ສັດທີ່ຫຼັກແຫຼມກວ່າສັດທັງຫຼາຍ." ຕາມພຣະຄັມພີ, ຄໍາວ່າຫຼັກແຫຼມເປັນລັກສນະທີ່ນໍາໃຊ້ໃນທາງດີຫຼືທາງຊົ່ວກໍໄດ້ (ສພສ 12:23). ເຖິງແມ່ນພຣະຄໍາປະຖົມມະການບໍ່ໄດ້ຣະບຸວ່າເປັນບ່ອນສະຖິດຢູ່ຂອງຜີມານ, ພາຍລຸນມາພຣະຄັມພີໄດ້ບອກວ່າງູແມ່ນຊາຕານ (ພນມ 20:2). ຄຣິສຕຽນຈິງໃຈຫຼາຍຄົນກັງວົນວ່າເຂົາອາດບໍ່ສາມາດຈໍາແນກຄວາມແຕກຕ່າງຣະຫວ່າງສຽງຂອງມານ ແລະສຽງຂອງພຣະເຈົ້າໄດ້.

ເຂົາຢ້ານວ່າຊາຕານອາດຫຼອກລວງເຂົາ ໃຫ້ນໍາອັນຕະລາຍມາສູ່ເຂົາແລະຄົນອື່ນ. ເຖິງຢ່າງໃດກໍຕາມ ທັງພຣະເຈົ້າແລະຊາຕານຕ່າງກໍເວົ້າຕາມທັມມະຊາດຂອງຕົນເອງ. ຖ້າທ່ານເຝົ້າຣະວັງຢູ່, ຊາຕານກໍຈະປົບໜີໄປ.

*ມີວິທີໃດແດ່ທີ່ວັທນາທັມຂອງເຮົາພຍາຍາມທໍາລາຍສິດອໍານາດຂອງພຣະຄັມພີ?*

ງູໄດ້ຖາມເອວາ, ມັນເວົ້າວ່າ "ພວກເຈົ້າ," ມັນໃຊ້ຈຳນວນຫຼາຍແຕ່ລະເທື່ອ. ນີ້ບາງທີອາດບອກວ່າອາດາມກໍຢູ່ນຳ, ໄດ້ຍິນສິ່ງທີ່ຊາຕານເວົ້າຄືກັນ. (ປຖກ 3:6 ກໍໄດ້ກ່າວວ່າ ອາດາມກໍໄດ້ຢູ່ກັບນາງ). ຊາຕານເປັນພໍ່ຂອງການຕົວະ ແລະເປັນນາຍຂອງການຫຼອກລວງ (ໂຢຮັນ 8:44). ໃນການທົດລອງເອວາຄັ້ງນີ້, ມັນຊັກຈູງນາງຢ່າງອ່ອນໂຍນເພື່ອຫວັງທຳລາຍນາງ.

- **ຊາຕານໃຊ້ຄຳເວົ້າຂອງພຣະເຈົ້າຖາມ.** *"ແມ່ນແທ້ບໍ ທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ພວກເຈົ້າກິນໝາກໄມ້ໃນສວນນີ້?"* ແທນທີ່ຈະທັບເຫຈາກພຣະທັມເບື້ອງຕົ້ນ, ມັນເລີ່ມສ້າງຄວາມສົງສັຍຂຶ້ນມາ. ທຸກຄັ້ງທີ່ຄົນເວົ້າສິ່ງໃດສິ່ງນຶ່ງທີ່ພາໃຫ້ທ່ານສົງສັຍຄຳແນະນຳຂອງພຣະເຈົ້າ, ທ່ານຕ້ອງແນ່ໃຈໂລດວ່າ ນັ້ນບໍ່ແມ່ນພຣະເຈົ້າເປັນຜູ້ເວົ້າ!
- **ຊາຕານບິດເບືອນພຣະທັມຂອງພຣະເຈົ້າ.** ງູໄດ້ຖາມວ່າ, *"ແມ່ນແທ້ບໍ ທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ພວກເຈົ້າກິນໝາກໄມ້ໃນສວນນີ້?"* ນີ້ແມ່ນການບິດເບືອນສິ່ງທີ່ພຣະເຈົ້າໄດ້ເວົ້າຢ່າງໃຫຍ່ຫຼວງ. ຄວາມຈິງ, ພຣະເຈົ້າໄດ້ໃຫ້ "ອິສຣະພາບ" ອາດາມແລະເອວາກິນໝາກໄມ້ໃນສວນໄດ້ທຸກຕົ້ນ," ຍົກເວັ້ນຕົ້ນດຽວ (ປຖກ 2:16-17). ພຣະເຈົ້າປ່ອຍວາງຕລອດທັງສວນໄວ້ຕໍ່ໜ້າເຂົາແລະບອກເຂົາໃຊ້ຫຼາຍເທົ່າທີ່ຈະຫຼາຍໄດ້ຕາມໃຈຊອບ.
- **ຊາຕານປອງຮ້າຍພຣະລັກສນະຂອງພຣະເຈົ້າ.** ຊາຕານໄດ້ອ້າງວ່າພຣະເຈົ້າສງວນສິ່ງດີຈາກອາດາມແລະເອວາ. ນີ້ແມ່ນການຫຼອກລວງທີ່ຊາຕານມັກທີ່ສຸດ. ແທນທີ່ຈະຊີ້ໃສ່ປ່າກວ້າງທີ່ເຂົາສາມາດກິນໄດ້, ຊາຕານກັບເຈາະຈົງໃສ່ຕົ້ນໄມ້ຕົ້ນດຽວທີ່ຖືກຫວງຫ້າມນັ້ນ.

ອາວຸດນຶ່ງທີ່ອັນຕະລາຍທີ່ສຸດຂອງຊາຕານແມ່ນຄວາມສາມາດບິດເບືອນພຣະຄັມພີ. ພຣະທັມຂອງພຣະເຈົ້າດີ ແລະນຳເອົາຊີວິດມາໃຫ້ (ພສສ 119:50; ຢຮ 6:63). ແຕ່ຊາຕານມີຄວາມຊຳນານໃນການໃສ່ຮ້າຍປ້າຍສີພຣະທັມພຣະເຈົ້າໃຫ້ເປັນແສງທີ່ເສົ້າໝອງເທົ່າທີ່ຈະເສົ້າໝອງໄດ້. ແທນທີ່ຈະສຸມໃສ່ອິສຣະພາບທີ່ຄຳສັ່ງຂອງພຣະເຈົ້ານຳມາ ຊາຕານກັບເນັ້ນໜັກຂໍ້ຫ້າມຂອງພຣະເຈົ້າ.

ພຣະເຈົ້າບໍ່ເຄີຍເວົ້າຖ້ອຍທຳນອງຂັດກັບພຣະທັມທີ່ພຣະອົງຊົງຕຣັດໄວ້ກ່ອນ. ພຣະເຈົ້າບໍ່ເຄີຍສື່ສານໃນທາງບິດເບືອນພຣະລັກສນະຫຼືມາດຕະຖານຂອງພຣະອົງຈັກເທື່ອ. ໃນທາງກົງກັນຂ້າມ, ຊາຕານສືບຕໍ່ບິດເບືອນບໍ່ຢຸດຢັ້ງ.

## 2. <u>ປະຖົມການ 3:2-3.</u>

*[2]ຜູ້ຍິງນັ້ນຕອບວ່າ, "ໝາກໄມ້ທຸກໆ ຕົ້ນໃນສວນນີ້ ພວກເຮົາກິນໄດ້ [3]ເວັ້ນໄວ້ແຕ່ໝາກໄມ້ໃນຕົ້ນທີ່ຢູ່ກາງສວນນັ້ນ. ເພາະພຣະເຈົ້າບອກບໍ່ໃຫ້ພວກເຮົາກິນ ຫຼື ແມ່ນແຕ່ແຕະຕ້ອງເປັນເດັດຂາດ ຖ້າພວກເຮົາຂືນກິນ ພວກເຮົາຕ້ອງຕາຍ."*

ເອວາໄດ້ຕອບຄຳບິດເບືອນຂອງງູ ທີ່ບໍ່ສອດຄ່ອງກັບຄຳສັ່ງຂອງພຣະເຈົ້າ ດ້ວຍຄຳບິດເບືອນຂອງນາງເອງ. ນາງເຂົ້າໃຈດີວ່າພຣະເຈົ້າອະນຸຍາດໃຫ້ກິນໝາກໄມ້ໃນສວນໄດ້ທຸກຕົ້ນ, ແຕ່ນາງກ່າວຕໍ່ວ່າ, "*ເວັ້ນໄວ້ແຕ່ໝາກໄມ້ໃນຕົ້ນທີ່ຢູ່ກາງສວນນັ້ນເພາະພຣະເຈົ້າບອກບໍ່ໃຫ້ພວກເຮົາກິນ ຫຼື ແມ່ນແຕ່ແຕະຕ້ອງເປັນເດັດຂາດ ຖ້າພວກເຮົາຂືນກິນ ພວກເຮົາຕ້ອງຕາຍ.*" ຊາຕານຫາທາງບ່າຍບ່ຽງຈາກພຣະທັມພຣະເຈົ້າ ໂດຍໄດ້ອ້າງຖ້ອຍຄຳພຣະເຈົ້າວ່າເອວາບໍ່ສາມາດກິນໝາກໄມ້ທຸກຕົ້ນ. ອັນນີ້ບໍ່ຖືກຕ້ອງຢ່າງຈະແຈ້ງ, ແຕ່ເອວາຍອມຮັບຄວາມຜິດພາດຄືກັນນີ້, ຄືຕື່ມຄຳເວົ້າໃສ່ຄຳສັ່ງຂອງພຣະເຈົ້າ. ນາງຕື່ມວ່າພຣະເຈົ້າຫ້າມແຕະຕ້ອງໝາກໄມ້. ແຕ່ບໍ່ແມ່ນ. ເອວາໄດ້ເຮັດໃຫ້ຖ້ອຍຄຳຂອງພຣະເຈົ້າຫຼຸດລົງ. ນາງໄດ້ຂ້າມຄຳວ່າ "ຟຣີ" ແລະ "ທຸກຕົ້ນ" ຈາກຄຳສັ່ງຂອງພຣະເຈົ້າ. ພຣະເຈົ້າໄດ້ເປີດອິສຣະພາບກວ້າງສຸດຂີດແລ້ວ, ແຕ່ຖ້ອຍຄຳຂອງເອວາເຮັດໃຫ້ຄວາມເອື້ອເຟື້ອຂອງພຣະເຈົ້າຫຼຸດລົງ. ເມື່ອເອວາປະຂໍ້ຄວາມສຳຄັນ "ທຸກຕົ້ນ" ແລະ "ຟຣີ," ນາງຂາດການຮັບຮູ້ການຈັດຫາດ້ວຍຄວາມເມດຕາແລະອຸດົມຂອງພຣະເຈົ້າ. ເອວາບໍ່ຮູ້ແມ້ກະທັ້ງຄວາມຈິງພຣະທັມຂອງພຣະເຈົ້າ, ຫຼື, ໃນການສົນທະນາກັບຜູ້ເຍາະເຍີ້ຍພຣະເຈົ້າ, ພາໃຫ້ນາງເວົ້າລື່ນຂໍ້ຄຳສັ່ງຂອງພຣະເຈົ້າຈົນເກີນສ່ວນ. ຫຼື ບາງເທື່ອນາງແລະອາດາມໄດ້ກຳນົດເອົາວ່າທາງທີ່ດີທີ່ສຸດໃນການບໍ່ກິນໝາກໄມ້ຫວງຫ້າມແມ່ນບໍ່ແຕະດີກວ່າ. ບາງທີ ອາດາມແລະເອວາໄດ້ຕັ້ງກົດ

ຂອງເຂົາຂຶ້ນເອງ. ບາງເທື່ອເຂົາເຫັນພ້ອມບໍ່ແຕະຕົ້ນໄມ້ເພື່ອປ້ອງກັນຕົວ, ຊ່ວຍເຂົາໃຫ້ຢູ່ຫ່າງຈາກສິ່ງທີ່ຫວງຫ້າມ. ຈະຕົກໃນກໍຣະນີໃດກໍຕາມ, ການເພີ່ມໃສ່ກໍຈະເຮັດໃຫ້ຂໍ້ຫ້າມຂອງພຣະເຈົ້າປາກົດເຄັ່ງຂັດຂຶ້ນ.

ໂດຍປົກຕິ ຄົນທີ່ມີເຈຕນາຮ້າຍມັກຈະເພີ້ມຂໍ້ຈຳກັດໃສ່ຊີວິດຄຣິສະຕຽນທີ່ພຣະເຈົ້າບໍ່ເຄີຍໄດ້ສັ່ງ. ຕິດຕາມວິນັຍສ່ວນຕົວແລະການຕັດສິນລົງໂທດສ່ວນຕົວຂອງທ່ານເອງ ສາມາດຊ່ວຍຮັກສາການເດີນກັບພຣະຄຣິດ ແລະໃນການເຕີບໃຫຍ່ໃກ້ພຣະອົງຍິ່ງຂຶ້ນ. ແຕ່ມັນບໍ່ຖືກຕ້ອງຈັກເທື່ອ ທີ່ຈະເຮັດໃຫ້ກົດເຫຼົ່ານັ້ນເທົ່າທຽມກັບພຣະຄັມພີ, ແລະມັນບໍ່ຕ້ອງສັ່ງຄົນອື່ນເຮັດຕາມກົດເຫຼົ່ານັ້ນຄິດວ່າເປັນສ່ວນນຶ່ງຂອງພຣະທັມພຣະເຈົ້າ. ຄົນມີແນວໂນ້ມສ້າງສາສນາທີ່ມີການບັງຄັບຫຼາຍກວ່າກົດພຣະເຈົ້າຕັ້ງໄວ້!

ມີທາງໃດແດ່ທີ່ຄົນຕີຄວາມໝາຍຜິດຫຼືປ່ຽນແປງຖ້ອຍຄຳຂອງພຣະເຈົ້າ?

## 3. <u>ປະຖົມການ 3:4-6</u>.

*[4]ງູຈຶ່ງຕອບວ່າ, "ບໍ່ເປັນຄວາມຈິງ ພວກເຈົ້າຈະບໍ່ຕາຍດອກ.[5]ພຣະເຈົ້າເວົ້າເຊັ່ນນັ້ນ ກໍເພາະພຣະອົງຊົງຮູ້ດີວ່າ ເມື່ອໃດທີ່ເຈົ້າກິນໝາກ
ໄມ້ນັ້ນ ເຈົ້າຈະຮູ້ແຈ້ງເຫັນຈິງກັບຈະຮູ້ການດີ ແລະການຊົ່ວເໝືອນດັ່ງພຣະອົງ." [6]ຜູ້ຍິງເຫັນວ່າໝາກໄມ້ໃນຕົ້ນນັ້ນຊ່າງງາມ ແລະເປັນ
ໜ້າຢາກກິນອີ່ຫລີ ນອກນີ້ນາງຍັງຄິດວ່າຈະມີສະຕິປັນຍາອີກ ດັ່ງນັ້ນ ນາງຈຶ່ງຕັດສິນໃຈປິດເອົາໝາກໄມ້ແລ້ວກິນ ຄັນແລ້ວຈຶ່ງເອົາ
ໝາກໄມ້ນັ້ນໃຫ້ຜົວນາງກິນນຳ.*

ຍິ່ງເອວາລົມກັບງູນານເທົ່າໃດ, ການຫຼອກລໍ້ຂອງມັນຕໍ່ຄຳແນະນຳຂອງພຣະເຈົ້າກໍຍິ່ງກາຍເປັນຈິງຫຼາຍເທົ່ານັ້ນ.

- **ຊາຕານຫຼຸດຜ່ອນຜົນກັມຕາມສນອງຂອງຄວາມບາບ.** "ບໍ່! ພວກເຈົ້າຈະບໍ່ຕາຍດອກ" (ຂໍ້4). ເປັນຫຍັງຄົນຈຶ່ງຫຼິ້ນຊູ້, ເຖິງແມ່ນວ່າມັນຈະທຳລາຍການແຕ່ງງານ, ທຳລາຍຊື່ສຽງ, ເປັນອັນຕລາຍຕໍ່ລູກຂອງເຂົາຢ່າງຮ້າຍແຮງ, ຫູ່ກຽດພຣະນາມບໍຣິສຸດຂອງພຣະເຈົ້າ, ພາໃຫ້ເສັຽຊັບສິນ, ແລະອາດເສັຽຮອດການງານບໍ່ແມ່ນບໍ່? ກໍເພາະເຂົາເຊື່ອຊາຕານຕົວະວ່າເຂົາຈະບໍ່ທົນທຸກຈາກຜົນກັມຕາມທັນ.
- **ຊາຕານແນະນຳວ່າພຣະເຈົ້າຫວງສິ່ງດີໄວ້.** ຊາຕານເກັ້ງກ່ອມວ່າພຣະເຈົ້າຂີ້ຖີ່ແລະໂຫດຮ້າຍ ຍ້ອນວ່າພຣະເຈົ້າມີກົດຂໍ້ນຶ່ງທົ່ວທັງສວນ. ໂລກຖິ້ມຣະເບີດໃສ່ຄົນທຸກວັນນີ້ດ້ວຍການໂຈມຕີໂດຍການໂຄສະນາຊວນເຊື່ອວ່າຊີວິດເຂົາຈະບໍ່ເຕັມບໍຣິບູນເວັ້ນແຕ່ເຂົາຈະມີສິ່ງນຶ່ງທີ່ພຣະເຈົ້າເອີ້ນວ່າບາບ.
- **ຊາຕານລໍ້ດ້ວຍປັນຍາແລະຄຳສັນຍາວ່າຈະເປັນເໝືອນພຣະເຈົ້າ.** ຈົ່ງວາດພາບເບິ່ງວ່າສິ່ງຊົງສ້າງນັ້ນຂີ້ຄ້ານສໍ່າໃດ, ເປັນພຽງດິນດາກ, ບັດນີ້ນາງເຊື່ອວ່ານາງຈະເປັນເໝືອນພຣະຜູ້ສ້າງຂອງນາງ. ມັນໜ້າຂຳເທົ່າໃດສຳລັບພວກເຮົາ ເມື່ອເຮົາອ່ານປວັດຂອງເອວາ, ຄົນຕາຍນຳການທົດລອງນີ້ຕລອດເວລາ. ຄວາມຮູ້ເປັນເຫຍື່ອລໍ້. ມັນອຸປຖັມຄວາມອວດຕົວ. ມັນພາໃຫ້ຄົນຄິດວ່າເຂົາບໍ່ຈຳເປັນຕ້ອງອາສັຍພຣະເຈົ້າອີກຕໍ່ໄປ.

ເປັນຫຍັງຄົນຈຶ່ງມັກຕົກໃນບ້ວງແຮ້ວຂອງຊາຕານ?

ເອວາບໍ່ໄດ້ຢູ່ຜູ້ດຽວ. ອາດາມກໍຢູ່ທີ່ນັ້ນກັບນາງ. "ນາງໄດ້ເອົາໝາກໄມ້ບີ້ງນຶ່ງໃຫ້ສາມີຂອງນາງຄືກັນ, ຜູ້ທີ່ຢູ່ກັບນາງ, ແລະລາວໄດ້ກິນໝາກໄມ້ນັ້ນ" (ຂໍ້6). ໜ້າເສົ້າໃຈ, ອາດາມຮູ້ດີວ່າເປັນການຂັດຄຳສັ່ງ. ບໍ່ວ່າເປັນບາບອັນດຽວໂດຍການເມີນເສີຍ, ການຫຼອກລວງ, ຫຼືເລີ່ນເລີ້, ມັນກໍຍັງເປັນບາບຢູ່ດີ.

ພວກເຮົາຕ້ອງຮຽນຮູ້ການຈຳສຽງຂອງພຣະເຈົ້າ. ຈົ່ງຈຳໄວ້ວ່າ, ພຣະອົງຈະບໍ່ຮຽກຮ້ອງໃຫ້ເຮົາເຮັດສິ່ງນຶ່ງສິ່ງໃດທີ່ກົງກັນຂ້າມກັບຂໍ້ພຣະຄັມພີ. ຂໍໃຫ້ເຮົາຮູ້ຈັກພຣະທັມຂອງພຣະອົງແລະຢືນຢັດຢູ່ກັບພຣະທັມນັ້ນຢ່າງແທ້ຈິງ.

*ກຸ່ມຂອງພວກເຮົາຈະຊ່ວຍກັນຫຼີກເວັ້ນບ້ວງແຮ້ວຊາຕານແລະຢືນຢັດຢູ່ກັບພຣະທັມຂອງພຣະເຈົ້າຢ່າງແທ້ຈິງຢ່າງໃດ?*

# ນຳໃຊ້ໃນຊີວິດ

ສຽງຂອງພຣະເຈົ້າຈະບໍ່ຂັດກັບພຣະຄັມພີຈັກເທື່ອ. ທ່ານຈະດຳເນີນຊີວິດໃນຄວາມຈິງໃນບົດຮຽນນີ້ຢ່າງໃດ? ຈົ່ງເລືອກການນຳໃຊ້ຂໍ້ໃດ ຂໍ້ໜຶ່ງຕໍ່ລົງໄປນີ້:

- **ຈົ່ງສຳຣວດ:** ຈົ່ງຈົດລາຍການທາງທີ່ໂລກປະຕິເສດພຣະທັມພຣະເຈົ້າທຸກວັນນີ້ ຈົ່ງພິຈາຣະນາວ່າເປັນຫຍັງຄົນຈຶ່ງເລືອກປະຕິເສດ ພຣະເຈົ້າ ແລະພຣະທັມຂອງພຣະອົງໃນທາງນີ້.

- **ຈົ່ງຈົດລາຍການ:** ຈົ່ງຈົດລາຍການ ສິ່ງທີ່ທ່ານຕ້ອງຕັດສິນໃຈແລະສັງເກດ "ສຽງຕ່າງໆ" ທີ່ແນະນຳທ່ານວ່າຈະຕັດສິນໃຈຢ່າງໃດ. ຈົ່ງພິຈາຣະນາສຽງເຫຼົ່ານັ້ນທຽບກັບພຣະທັມພຣະເຈົ້າ. ຈົ່ງທູນຂໍສະຕິປັນຍາແລະຄວາມສລາດສລຽວ ເພື່ອເຮັດສິ່ງທີ່ບໍ່ຂັດກັບຂໍ້ຄຳ ສັ່ງພຣະເຈົ້າທີ່ບັນທຶກໄວ້ໃນພຣະທັມພຣະອົງ.

- **ຈົ່ງສຶກສາ.** ຈົ່ງວາງແຜນການສຶກສາພຣະຄັມພີສຳລັບສິບສອງເດືອນຕໍ່ໜ້າ ບ່ອນທີ່ທ່ານຕັ້ງໃຈຮຽນພຣະທັມພຣະເຈົ້າໃຫ້ດີຂຶ້ນກວ່າ ເກົ່າ. ຣະບຸປຶ້ມຫຼືພຣະຄັມພີສຶກສາ ທີ່ທ່ານສາມາດເຮັດເພື່ອທ່ານຈະເຂົ້າໃຈພຣະທັມເລິກເຂົ້າໄປຕື່ມ.

ເມື່ອພວກເຮົາຮູ້ຈັກກັບບາງຄົນດີ, ພວກເຮົາກໍຈະຈຳສຽງຂອງເຂົາແລະຈະບໍ່ພາໃຫ້ເວ. ດ້ວຍເຫດນີ້ເຮົາຈຶ່ງພະຍາຍາມໃຫ້ເຕີບໃຫຍ່ຂຶ້ນ ໃນຄວາມຮູ້ຈັກພຣະເຈົ້າແລະຮູ້ຈັກພຣະທັມຂອງພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**